CHANTHABOULY et al. (2021). Souphanouvong Journal of Multidisciplinary Research and Development
ISSN 2521-0653. Volume 7. Issue 1. Jan – Jun 2021. Page 161-167.

# ສຶກສາຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູປະຖົມລະດັບປະລິນຍາຕີ ປີ 3 ຕໍ່ການຮຽນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ ໃນ ວິທະຍາໄລຄູດົງຄຳຊ້າງ

**ກອງແສງ ຈັນທະບູລີ*, ສິນໃຈ ພອງລະສອນ ແລະ ສຸພາເພັນ ສຸວັນນະບັນດິດ**

*ຫ້ອງການສົ່ງເສີມວິຊາການ ວິທະຍາໄລຄູ ດົງຄຳຊ້າງ*

**ຜູ້ຕິດຕໍ່ພົວພັນ:** *ກອງແສງ ຈັນທະບູລີ, ວິທະຍາໄລຄູດົງຄຳຊ້າງ ນະຄອນຫຼວງວຽງຈັນ*
*ໂທ: +856 20 2203 1861, E-mail: Kongsengctbl@gmail.com*

**ຂໍ້ມູນບົດຄວາມ:**
*ວັນທີສະໝັກ: 27 ພຶດສະພາ 2021*
*ປັບປຸງສຳເລັດ: 14 ມິຖຸນາ 2021*
*ຕອບ-ຮັບ: 24 ມິຖຸນາ 2021*

## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງເພື່ອ: ສຶກສາຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູປະຖົມລະດັບປະລິນຍາຕີ ປີ 3 ຕໍ່ການຮຽນ ວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ; ປຽບທຽບຄວາມເພິ່ງພໍໃຈຂອງນັກສຶກສາຍິງ ແລະ ນັກສຶກສາຊາຍສາຍຄູປະຖົມລະດັບປະລິນຍາຕີ ປີ 3 ຕໍ່ການຮຽນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ. ການຄົ້ນຄວ້າຄັ້ງນີ້ມີ ກຸ່ມຕົວຢ່າງມີຈຳນວນທັງໝົດ 76 ຄົນ ຍິງ 50 ຄົນ ເຊິ່ງເປັນນັກສຶກສາສາຍຄູປະຖົມລະດັບປະລິນຍາຕີ ປີທີ 3 ພາຍໃນວິທະຍາໄລຄູ ດົງຄຳຊ້າງ ສົກຮຽນ 2019 - 2020. ເຄື່ອງມືທີ່ໃຊ້ໃນການສຶກສາຂໍ້ມູນໃນຄັ້ງນີ້ແມ່ນແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາຄູປະຖົມຕໍ່ການຮຽນວິຊາ ວິທີສອນສິລປະກຳ ແລະ ຫັດຖະກຳ ເຊິ່ງປະກອບດ້ວຍ 5 ດ້ານ, ມີ 36 ຄຳຖາມ, ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.94. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ຄ່າສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ການຫາຄ່າ t-test ແລະ ປຽບທຽບລາຍຄູ່ໂດຍວິທີການທາງ ເຊຟເຟ່ (schaeffer).

ຜົນການຄົ້ນຄວ້າພົບວ່າ:

ຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູປະຖົມລະດັບປະລິນຍາຕີ ປີທີ 3 ຕໍ່ການສອນວິຊາ ວິທີສິລະປະກຳ ແລະ ຫັດຖະກຳ ໂດຍລວມແລ້ວ ຢູ່ໃນລະດັບ ຫຼາຍ ແລະ ພິຈາລະນາເປັນລາຍດ້ານ ກໍ່ຢູ່ໃນລະດັບ ຫຼາຍ ທັງ 5 ດ້ານ, ເມື່ອຈັດລຽງຕາມດ້ານທີ່ມີຄ່າສະເລ່ຍສູງຈົນຮອດຕໍ່າຄື: ດ້ານບຸກຄະລິກກະພາບຂອງຄູສອນ, ດ້ານເນື້ອໃນຫຼັກສູດ, ດ້ານການຈັດການຮຽນການສອນ, ດ້ານສະພາບແວດລ້ອມໃນການຮຽນ, ດ້ານການວັດ ແລະ ປະເມີນຜົນ.

ນັກສຶກສາສາຍຄູປະຖົມລະດັບປະລິນຍາຕີ ປີທີ 3 ທີ່ເປັນເພດຍິງ ມີຄວາມເພິ່ງພໍໃຈຕໍ່ການສອນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ ທີ່ແຕກຕ່າງກັບນັກສຶກສາທີ່ເປັນເພດຊາຍ ຢ່າງມີໄນຍະສຳຄັນທາງສະຖິຕິທີ່ລະດັບ 0.05.

**ຄຳສັບສຳຄັນ:**

*ຄວາມເພິ່ງພໍໃຈ, ການຈັດການຮຽນການສອນສິລະປະກຳ ແລະ ຫັດຖະກຳ*

# Study on Satisfactions of Primary Teachers for Undergraduate Level Year 3 on Methods of Teaching Arts and Crafts at Dongkhamxang Teacher Training College

**Kongseng CHANTHABOULY*, Sonchai PHUANGLASON and Souphaphern SOUVANNABANDITH**

*Primary Teacher Training Majoring Academic Promotion office, Dongkhamxang Teacher Training College, Lao PDR*

***Corresponding Author:**
*Kongseng CHANTHABOULY, Dongkhamxang Teacher Training College*
*Tel: +856 20 2203 1861,*
*Email:Kongsengctbl@gmail.com*

***Article Info:***
*Submitted: My 27, 2021*
*Revised: Jun 14, 2021*
*Accepted: Jun 24, 2021*

**ABSTRACT**

The purpose of this research was to 1) study the satisfaction of the primary trainee teachers with the teaching of art and handicrafts methodology. 2) to comparing the satisfaction of female students and male students in the 3rd year undergraduate teacher training students with the teaching art and handicrafts methodology. This research has a total population of 93 people and 60 females. The sample group consisted of 76 people and 50 females by the way of Taro YAMANE, the sample group who were the 3rd year undergraduate teacher training students in Dongkhamxang Teacher Training College in academic year 2019-2020. The data collection tool was a questionnaire for study on satisfaction of elementary teacher training students with learning of art and handicrafts methodology that consist of 5 items and 36 questions. The variability value is 0.94. The statistics used in the data analysis were percentage, mean, standard deviation, t-test and pair comparison by the way of schaeffer.

**The research found that:**

1. Satisfaction of the 3rd year undergraduate teacher training students with the teaching of Arts and Crafts methodology were high level in all 5 items by according to the high to low average: personality, curriculum, teaching and learning management, learning environmental, measurement and evaluation.
2. Female undergraduate students in the 3rd year are satisfied with the teaching of art and crafts methodology whereas different from male students with a statistically significant level of 0.05

**Key words:**

*Satisfaction, Art and crafts methodology teaching and learning management*

## 1. ພາກສະເໜີ

ວິທີສອນສິລະປະກຳ ແລະ ຫັດຖະກຳ ແມ່ນ ໜຶ່ງໃນວິຊາຮຽນທີ່ກຳນົດໄວ້ໃນຫຼັກສູດສ້າງຄູປະຖົມທຸກໆລະດັບເຊິ່ງຕອບສະໜອງໃຫ້ແກ່ 3 ລັກສະນະ 5 ຫຼັກມູນການສຶກສາແຫ່ງຊາດ, ນັກສຶກສາຄູຈະໄດ້ຮຽນຮູ້ກ່ຽວກັບຫຼັກສູດວິຊາສິລະປະກຳ-ຫັດຖະກຳໃນຊັ້ນປະຖົມ, ແຕ່ງບົດສອນ ແລະ ການຈັດກິດຈະກຳການຮຽນການສອນ, ວຽກບ້ານໃນຊັ້ນປະຖົມສຶກສາເປັນວິຊາໜຶ່ງທີ່ຊ່ວຍໃຫ້ນັກຮຽນມີຄວາມຮູ້ພື້ນຖານທາງດ້ານການສ້າງສັນງານສິລະປະ, ມີຫົວຄິດປະດິດສ້າງ ແລະ ມີຈິນຕະນາການອັນໃໝ່, ການ

ຜະລິດ ແລະ ການນຳໃຊ້ສື່ເຂົ້າໃນການຮຽນ-ການສອນຕາມບົດຮຽນໃນແຕ່ລະເນື້ອໃນບົດຮຽນຢ່າງຖືກຕ້ອງ, ວິທີແຕ່ງບົດສອນ ແລະ ການສອນທົດລອງ (ກະຊວງສຶກສາທິການ ແລະ ກິລາ, 2016). ຄວາມເພິ່ງພໍໃຈໃນບັນຍາກາດການຮຽນໝາຍເຖິງ ຄວາມພໍໃຈໃນສະພາບການຈັດອົງປະກອບທີ່ກ່ຽວຂ້ອງກັບການຮຽນການສອນ ເຊິ່ງມີຄວາມສຳຄັນຊ່ວຍໃຫ້ນັກຮຽນເກີດການຮຽນຮູ້ຢ່າງມີຊີວິດຊີວາ, ມີຄວາມເພີດເພີນຈະເລີນຈິດໃຈແຈ່ມໃສ ມີຄວາມກະຕືລືລົ້ນຕໍ່ການຮຽນທີ່ກໍ່ໃຫ້ເກີດປະໂຫຍດໃຫ້ກັບຕົນເອງ (ສຸເທບ ເມກ, ພສ 2531)

ບົດສະຫຼຸບຂອງວິທະຍາໄລຄູດົງຄຳຊ້າງ ປະຈຳສົກຮຽນ 2018 - 2019 ໄດ້ໃຫ້ຮູ້ວ່າ ການປະເມີນຜົນການຮຽນ-ການສອນວິຊາວິທີສອນສິລະປະກຳ ແລະ ຫັດຖະກຳ ໃນສົກຮຽນ 2018 - 2019 ເຫັນວ່າ ນັກສຶກສາຄູປະຖົມລະດັບປະລິນຍາຕີ ປີທີ 3 ສ່ວນຫຼາຍມີຄະແນນທີ່ຢູ່ໃນເກນຕ່ຳໂດຍສະເພາະແມ່ນຄະແນນບຸກຄົນ, ຄະແນນສອບເສັງກາງພາກ ແລະ ຄະແນນສອບເສັງທ້າຍພາກ ເຊິ່ງສົ່ງຜົນໃຫ້ຄະແນນສະເລ່ຍສະສົມມີລະດັບທີ່ຕ່ຳກວ່າມາດຕະຖານທີ່ວິທະຍາໄລຄູ ດົງຄຳຊ້າງ ໄດ້ກຳນົດໄວ້ (ວິທະຍາໄລຄູ ດົງຄຳຊ້າງ, 2019).

ຈາກການປະເມີນຜົນການຮຽນປະຈຳປີຂ້າງເທິງນັ້ນຈຶ່ງມີຄວາມຈຳເປັນຕ້ອງສຳຫຼວດຄວາມພໍໃຈຂອງນັກສຶກສາຄູຕໍ່ການເຂົ້າຮ່ວມຮຽນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ ໃນຫົວຂໍ້ ສຶກສາຄວາມເພິ່ງພໍໃຈຕໍ່ການຮຽນວິຊາວິທີສອນສິລະປະກຳ ແລະ ຫັດຖະກຳຂອງນັກສຶກສາສາຍຄູປະຖົມລະບົບ 12+4 ປີ 3 ໃນວິທະຍາໄລຄູ ດົງຄຳຊ້າງ.

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງເພື່ອ 1) ສຶກສາຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູປະຖົມລະດັບປະລິນຍາຕີ ປີ 3 ຕໍ່ການຮຽນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ 2) ປຽບທຽບຄວາມເພິ່ງພໍໃຈຂອງນັກສຶກສາຍິງ ແລະ ນັກສຶກສາຊາຍສາຍຄູປະຖົມລະດັບປະລິນຍາຕີ ປີ 3 ຕໍ່ການຮຽນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ.

## 2. ອຸປະກອນ ແລະ ວິທີການຄົ້ນຄວ້າ

ໃນການຄົ້ນຄວ້າຄັ້ງນີ້ ໄດ້ໃຊ້ເຄື່ອງມືທີ່ເປັນແບບສອບຖາມຄວາມເພິ່ງພໍໃຈຈຳນວນ 1 ຊຸດ ເພື່ອເກັບກຳຂໍ້ມູນຈາກກຸ່ມຕົວຢ່າງທີ່ເປັນນັກສຶກສາສາຍຄູປະຖົມ ລະບົບ 12+4 ປີທີ 3 ໃນວິທະຍາໄລຄູ ດົງຄຳຊ້າງ ປະຈຳສົກຮຽນ 2019 - 2020 ຈຳນວນ 76 ຄົນ ຍິງ 50 ຄົນ. ການຄົ້ນຄວ້າຄັ້ງນີ້ ເປັນການຄົ້ນຄວ້າແບບສຳຫຼວດ ເຊິ່ງໄດ້ເກັບຮວບຮວມຂໍ້ມູນ ທີ່ໄດ້ຈາກການຕອບແບບສອບຖາມຂອງນັກສຶກສາຄູ ແລ້ວນຳຂໍ້ມູນມາວິເຄາະຫາຄ່າສ່ວນຮ້ອຍ, ຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ໂດຍມີສູດຄິດໄລ່ດັ່ງລຸ່ມນີ້:

- ຄ່າສ່ວນຮ້ອຍ (Percentage)

$$P = \frac{f}{n} \times 100$$

P ແມ່ນຄ່າສ່ວນຮ້ອຍ

$f$ ແມ່ນຄ່າຄວາມຖີ່ຂອງຄະແນນ

$n$ ຈຳນວນຄົນຂອງກຸ່ມເປົ້າໝາຍ

- ຫາຄ່າຄ່າສະເລ່ຍ

$$\bar{X} = \frac{\sum X}{N}$$

$\bar{X}$ *ແມ່ນຄ່າສະເລ່ຍ*

$\sum X$ *ແມ່ນຜົນບວກຂອງຂໍ້ມູນທັງໝົດ*

$N$ *ແມ່ນຈຳນວນຄົນຂອງກຸ່ມເປົ້າໝາຍ*

- ຫາຄ່າຄ່າຜັນປ່ຽນມາດຕະຖານ (Standard Diviation)

$$SD = \sqrt{\frac{\sum(x-\bar{X})^2}{N}}$$

$SD$ ແມ່ນຄ່າຄ່າຜິດດ່ຽງມາດຕະຖານ

$x$ ແມ່ນຄະແນນ

$\bar{X}$ ແມ່ນຄ່າສະເລ່ຍ

$N$ ແມ່ນຈຳນວນຄົນຂອງກຸ່ມເປົ້າໝາຍ

ການວິເຄາະຂໍ້ມູນຕາມເກນການແປຄວາມໝາຍຂອງຄ່າສະເລ່ຍດັ່ງລຸ່ມນີ້:

ຄ່າສະເລ່ຍ 4.50 – 5.00 ມີລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ

ຄ່າສະເລ່ຍ 3.50 – 4.49 ມີລະດັບຄວາມເພິ່ງພໍໃຈຫຼາຍ

ຄ່າ ສະເລ່ຍ 2.50 – 3.49 ມີລະດັບຄວາມເພິ່ງພໍໃຈປານກາງ

ຄ່າສະເລ່ຍ 1.50 – 2.49 ມີລະດັບຄວາມເພິ່ງພໍໃຈໜ້ອຍ

ຄ່າສະເລ່ຍ 0.01 – 1.45 ມີລະດັບຄວາມເພິ່ງພໍໃຈໜ້ອຍທີ່ສຸດ

## 3. ຜົນໄດ້ຮັບ

ຜົນທີ່ໄດ້ຈາກການຄົ້ນຄວ້າຄັ້ງນີ້ແມ່ນມີດັ່ງນີ້:

ຂໍ້ມູນທົ່ວໄປຂອງນັກສຶກສາທີ່ຕອບແບບສອບຖາມຈຳນວນທັງໝົດ 76 ຄົນ ຜົນການວິເຄາະຂໍ້ມູນພົບວ່າຜູ້ຕອບແບບສອບຖາມສ່ວນໃຫຍ່ເປັນເພດຍິງ ກວມເອົາຮ້ອຍລະ 65.79% ສ່ວນເພດຊາຍຄິດເປັນສ່ວນຮ້ອຍແມ່ນ 34.21% ເຊິ່ງສະແດງໃນຕາຕະລາງທີ 1

ຜົນທີ່ໄດ້ຈາກການວິເຄາະຂໍ້ມູນ ຄວາມເພິ່ງພໍໃຈຂອງນັກສຶກສາຄູປະຖົມລະດັບປະລິນຍາຕີ ປີ 3 ພົບວ່ານັກສຶກສາຄູປະຖົມລະດັບປະລິນຍາຕີ ປີ 3 ມີຄວາມເພິ່ງພໍໃຈຕໍ່ການຮຽນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ ຢູ່ໃນລະດັບ ຫຼາຍ ດ້ວຍຄ່າສະເລ່ຍ 4.21 ແລະ ຄ່າຜັນປ່ຽນມາດຕະຖານ 0.66 ເຊິ່ງສະແດງໃນຕາຕະລາງ ທີ 2.

ຜົນທີ່ໄດ້ຈາກການປຽບທຽບຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູປະຖົມລະດັບປະລິນຍາຕີ ປີທີ 3 ຕໍ່ການຮຽນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ ໂດຍແຍກຕາມເພດ ພົບວ່າ ນັກສຶກສາສາຍຄູປະຖົມ ລະດັບປະລິນຍາຕີ ປີທີ 3 ທີ່ມີເພດຕ່າງກັນມີຄວາມເພິ່ງພໍໃຈຕໍ່ການຮຽນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ ແຕກຕ່າງກັນຢ່າງມີໄນຍະສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງສະແດງໃນຕາຕະລາງ ທີ 3.

## 4. ວິພາກຜົນ

ເມື່ອພິຈາລະນາຕາມຄວາມເພິ່ງພໍໃຈຂອງນັກສຶກສາຄູປະຖົມລະດັບປະລິນຍາຕີປີທີ 3 ໃນວິທະຍາໄລຄູດົງຄຳຊ້າງ ແລ້ວເຫັນວ່າ ນັກສຶກສາຄູປະຖົມມີຄວາມເພິ່ງພໍໃຈຕໍ່ການການຮຽນວິຊາວິທີສອນສິລະປະກຳ ແລະ ຫັດຖະກຳຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ຄວາມເພິ່ງພໍໃຈເປັນຄວາມຮູ້ສຶກພໍໃຈໃນສິ່ງທີ່ເຮັດ ແລະ ເຕັມໃຈປະຕິບັດໜ້າທີ່ວຽກງານໃຫ້ສຳເລັດຜົນຕາມຈຸດປະສົງທີ່ກຳນົດໄວ້ນັ້ນ ກໍ່ຕໍ່ເມື່ອນວຽກງານນັ້ນມີປະໂຫຍດຕອບແທນທາງດ້ານວັດຖຸ ແລະ ຈິດໃຈເຊິ່ງສາມາດຕອບສະໜອງຄວາມຕ້ອງການຂັ້ນພື້ນຖານໄດ້ (Strauss, G & Sayles, L. R:, 1960), ຄວາມເພິ່ງພໍໃຈໃນບັນຍາກາດການຮຽນໝາຍເຖິງຄວາມຮູ້ສຶກພໍໃຈໃນສະພາບການຈັດການຮຽນ ການສອນ ເຊິ່ງຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ຢ່າງມີຊີວິດຊີວາ, ມີຄວາມເບີກບານມ່ວນ ຊື່ນ, ມີຄວາມກະຕືລືລົ້ນທີ່ຈະຮຽນເພື່ອໃຫ້ເກີດປະໂຫຍດໃຫ້ແກ່ຕົນເອງ. (ສຸເທບ ເມກ, ພສ 2531), ຄວາມເພິ່ງພໍໃຈເປັນຄວາມຮູ້ສຶກ ຫຼື ເຈດຕະຄະຕິທີ່ດີຕໍ່ການປະຕິບັດວຽກງານຕາມພາລະໜ້າທີ່ ແລະ ຄວາມຮັບຜິດຊອບນັ້ນໆ ດ້ວຍໃຈຮັກ, ມີຄວາມກະຕືລືລົ້ນໃນການເຮັດວຽກ, ພະຍາຍາມຕັ້ງໃຈເຮັດວຽກໃຫ້ບັນລຸເປົ້າໝາຍ ແລະ ມີປະສິດທິພາບສູງສຸດ, ມີຄວາມສຸກກັບວຽກງານທີ່ເຮັດ (ນັດຖະມົນ ມີໄຊ, ພສ 2535) ແລະ ສອດຄ່ອງກັບຜົນງານການວິໄຈຂອງ ບັນຈົງ ພົນໄຊ ທີ່ສຶກສາກ່ຽວກັບຄວາມເພິ່ງພໍໃຈຂອງນັກສຶກສາ (ບັນຈົງ ພົນໄຊ, ພສ 2559).

ເຊັ່ນດຽວກັນ, ສິ່ງທີ່ນັກສຶກສາຄູປະຖົມເພິ່ງພໍໃຈທີ່ສຸດຕໍ່ການຮຽນ ວິທີສອນສິລະປະກຳ ແລະ ຫັດຖະກຳ ກໍ່ຄືດ້ານບຸກຄະລິກກະພາບຂອງຄູສອນ ອາດຈະເປັນເພາະວ່າບຸກຄະລິກກະພາບຂອງຄູສອນທີ່ມີປະສິດທິພາບແມ່ນຄູທີ່ມີຄວາມເຊື່ອໝັ້ນຕົນເອງ, ເປັນຜູ້ນຳທີ່ມີຄວາມສາມາດ, ກະຕືລືລົ້ນໃນການຈັດການຮຽນການສອນເປັນຄົນຊື່ສັດສຸດຈະລິດ, ໜ້າໄວ້ວາງໃຈຮັກສາສັນຍາທີ່ໃຫ້ໄວ້ກັບນັກຮຽນສະເໝີ, ມີຄວາມເຂົ້າໃຈນັກຮຽນໄດ້ດີ, ຄວບຄຸມກິດຈະກຳໃນຫ້ອງຮຽນໂດຍການໃຫ້ຄຳແນະນຳ ຄຳປຶກສາ, ເປີດໂອກາດໃຫ້ນັກຮຽນໄດ້ອະພິປາຍ ເພື່ອ ກະຕຸ້ນໃຫ້ນັກຮຽນໄດ້ສະແດງຄວາມຄິດເຫັນ, ໃຫ້ນັກຮຽນໄດ້ຮັບຄວາມຮູ້ໃໝ່ໆທີ່ປ່ຽນແປງຢູ່ສະເໝີ, ເປັນຄົນທີ່ມີອາລົມເພີດເພີນ ເວົ້າມ່ວນຊວນຫົວ (Grush, J.E. and Costin Frank, 1975) ແລະ ສອດຄ່ອງກັບຜົນງານການວິໄຈຂອງ ລະພາວັນ ບົວເທດ ທີ່ໄດ້ສຶກສາກ່ຽວກັບ ຜົນສຳເລັດທາງການຮຽນວິຊາທັດສະນະສິລະປະ ເລື່ອງພູມປັນຍາທ້ອງຖິ່ນໃນຈັງຫວັດປະທຸມທານີຕາມຊຸດກິດຈະກຳການສອນປະລິນຍານິພົນສິລະປະສຶກສາ (ລະພາວັນ ບົວເທບ, ພສ 2557).

ນັກສຶກສາທີ່ມີເພດຕ່າງກັນມີຄວາມເພິ່ງພໍໃຈຕໍ່ການຈັດການຮຽນການສອນ ວິທີສອນສິລະປະກຳ ແລະ ຫັດຖະກຳ ແຕກຕ່າງກັນຢ່າງມີໄນຍະສຳຄັນທາງສະຖິຕິ ທີ່ສອດຄ່ອງກັບທິດສະດີຂອງ ເດີຟເລີ ເປັນທິດສະດີການແບ່ງກຸ່ມທາງສັງຄົມທີ່ເປັນການພັດທະນາມາຈາກແນວຄິດທາງສັງຄົມວິທະຍາທີ່ອະທິບາຍວ່າ ປະຊາຊົນທີ່ມີລັກສະນະທາງສັງຄົມຄ້າຍຄືກັນເຊັ່ນ ການສຶກສາ, ລາຍໄດ້, ອາຊີບ, ເຊື້ອຊາດ, ສາສະໜາ, ອາຍຸ, ເພດ, ພູມລຳເນົາ ຈະມີພຶດຕິກຳການສື່ສານທີ່ຄ້າຍຄືກັນ (DeFleur.Melvin t,

1978, p. 20) ເນື່ອງຈາກວ່າ ເພດເປັນຕົວປ່ຽນສຳຄັນທີ່ມີອິດທິພົນຕໍ່ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຈັດການຮຽນການສອນ ວິທີສອນສິລະປະກຳ ແລະ ຫັດຖະກຳ ເຊິ່ງສອດຄ່ອງກັບຜົນງານວິໄຈຂອງ ຈາລຸວັນ ເທວະກຸນທີ່ສຶກສາກ່ຽວກັບຄວາມເພິ່ງພໍໃຈໃນການຈັດການຮຽນການສອນຂອງນັກຮຽນລະດັບປະກາສະນີຍະບັດວິຊາຊີບ ປະເພດວິຊາພານິດຊະຍະກຳ ປີທີ 1, 2, 3 ວິທະຍາໄລ ອາຊີວະສຶກສາ ສະເຊີງເຊົາ (ຈາລຸວັນ ເທວະກຸນ, 2555).

## 5. ສະຫຼຸບຜົນ

ຜ່ານການຄົ້ນຄວ້າຄັ້ງນີ້: ຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູປະຖົມລະດັບປະລິນຍາຕີ ປີທີ 3 ຕໍ່ການສອນວິຊາ ວິທີສິລະປະກຳ ແລະ ຫັດຖະກຳ ໂດຍລວມແລ້ວ ຢູ່ໃນລະດັບ ຫຼາຍ ແລະ ພິຈາລະນາເປັນລາຍດ້ານກໍ່ຢູ່ໃນລະດັບ ຫຼາຍ ທັງ 5 ດ້ານ, ເມື່ອຈັດລຽງຕາມດ້ານທີ່ມີຄ່າສະເລ່ຍສູງຈົນຮອດຕໍ່າຄື: ດ້ານບຸກຄະລິກກະພາບຂອງຄູສອນ, ດ້ານເນື້ອໃນຫຼັກສູດ, ດ້ານການຈັດການຮຽນການສອນ, ດ້ານສະພາບແວດລ້ອມໃນການຮຽນ, ດ້ານການວັດ ແລະ ປະເມີນຜົນ ເຊິ່ງບໍ່ສອດຄ່ອງກັບຂໍ້ສົມມຸດຖານທີ່ຕັ້ງເອົາໄວ້

ນັກສຶກສາສາຍຄູປະຖົມລະດັບປະລິນຍາຕີ ປີທີ 3 ທີ່ເປັນເພດຍິງ ມີຄວາມເພິ່ງພໍໃຈຕໍ່ການສອນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ ທີ່ແຕກຕ່າງກັບນັກສຶກສາທີ່ເປັນເພດຊາຍ ຢ່າງມີໄນຍະສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງສອດຄ່ອງກັບຂໍ້ສົມມຸດຖານທີ່ຕັ້ງໄວ້ແຕ່ເບື້ອງຕົ້ນ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ

DeFleur.Melvin t. (1978). Theories of Communication. In D. M. Co, *Theories of Communication* (p. 20). New York: copy.

Grush, J.E. and Costin Frank. (1975). The Student as Consumer of the Teaching Process in America. *Education Research Journal of The Student as Consumer of the Teaching Process*, 64-67.

Strauss, G & Sayles, L. R:. (1960). Personal the Human Problems of Management. In *Personal the Human Problems of Management* (pp. 119-121). New Jersey: Copy other source.

ກະຊວງສຶກສາທິການ ແລະ ກິລາ. (2015). *ກົດໝາຍວ່າການສຶກສາ (ສະບັບປັບປຸງ).* ກົມຈັດຕັ້ງ ແລະ ພະນັກງານ. ນະຄອນຫຼວງວຽງຈັນ: ລັດວິສາຫະກິດໂຮງພິມສຶກສາ.

ກະຊວງສຶກສາທິການ ແລະ ກິລາ. (2016). ຫຼັກສູດສ້າງຄູປະຖົມ ລະດັບປະລິນຍາຕີ. ໃນ ເນື້ອໃນຫຍໍ້ໝວດຄວາມຮູ້ວິຊາສະເພາະ, *ບົດຮຽນທີ 1 ຄວາມຮູ້ທົ່ວໄປກ່ຽວກັບວິທີສອນສິລະປະກຳ ແລະ ຫັດຖະກຳ* (ໜ້າ. 7). ນະຄອນຫຼວງວຽງຈັນ: ສຳເນົາເອກະສານປະກອບການສອນ.

ຈາລຸວັນ ເທວະກຸນ. (2555). ຄວາມເພິ່ງພໍໃຈໃນການຈັດການຮຽນການສອນຂອງນັກຮຽນລະດັບປະກາສະນີຍະບັດວິຊາຊີບ ປະເພດວິຊາພານິດຊະຍະກຳ ປີທີ 1, 2, 3 ວິທະຍາໄລ ອາຊີວະສຶກສາ ສະເຊີງເຊົາ. ໃນ ມະຫາວິທະຍາໄລສີນະຄະຣິນວິໂຣດ, *ການອະພິປາຍຜົນ* (ໜ້າ. 77). ກຸງເທບມະຫານະຄອນ: ຈຸລາລົງກອນມະຫາວິທະຍາໄລສີນະຄະຣິນວິໂຣດ.

ສຸເທບ ເມກ. (ພສ 2531). *ຄວາມເພິ່ງພໍໃຈໃນບັນຍາກາດການຮຽນການສອນຂອງນັກຮຽນ ແລະ ຄູໃນໂຮງຮຽນອາຊີວະສຶກສາເອກະຊົນ ປະເພດພານິດໃນເຂດການສຶກສາ 12. ປະລິນຍານິພົນ ກສ.ມ.ກຸງເທບ: ບັນດິດວິທະຍາໄລ ມະຫາວິທະຍາໄລ ສີນະຄະຣິນວິໂຣດ ປະສານມິດ.* ກຸງເທບມະຫານະຄອນ: ສຳເນົາເອກະສານ.

ນັດຖະມິນ ມີໄຊ. (ພສ 2535). *ຄວາມເພິ່ງພໍໃຈໃນການປະຕິບັດງານຂອງຄູ ສັງກັດສໍານັກງານປະຖົມສຶກສາ ຈັງຫວັດພະນະຄອນສີອະຍຸດທະຍາ ວິທະຍານິພົນການສຶກສາມະຫາບັນດິດ ມະຫາວິທະຍາໄລບູຣະພາ.* ມະຫາວິທະຍາໄລບູຣະພາ: ສໍາເນົາເອກະສານ.

ບັນຈົງ ພິນໄຊ. (ພສ 2559). ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຈັດການຮຽນການສອນວິຊາສິລະປະການສື່ສານແລະການນໍາສະເໜີ. *ວາລະສານວິໄຈທາງການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລສີນະຄະຣິນວິໂຣດ ປີທີ 11ສະບັບທີ 1 ເດືອນສິງຫາ 2559 ເຖິງ ເດືອນມັງກອນ 2560*, 71.

ລະພາວັນ ບົວເທບ. (ພສ 2557). *ຜົນສໍາເລັດທາງການຮຽນວິຊາທັດສະນະສິລະປະ ເລື່ອງພູມປັນຍາທ້ອງຖິ່ນໃນຈັງຫວັດປະທຸມທານີຕາມຊຸດກິດຈະກໍາການສອນ ປະລິນຍານິພົນ (ສິລະປະສຶກສາ).* ກຸງເທບມະຫານະຄອນ: ມະຫາວິທະຍາໄລສີນະຄະລິນວິໂຣດ.

ວິທະຍາໄລຄູ ດົງຄໍາຊ້າງ. (2019). *ບົດສະຫຼຸບຂອງວິທະຍາໄລຄູດົງຄໍາຊ້າງ ປະຈໍາສົກຮຽນ 2018-2019.* ນະຄອນຫຼວງວຽງຈັນ: ວິທະຍາໄລຄູດົງຄໍາຊ້າງ.

ແຄດທະລີຢາ ປັກໂຄທານັງ. (ພສ 2558). ຜົນການຈັດກິດຈະກໍາການຮຽນຮູ້ໂດຍໃຊ້ການສອນທີ່ສົ່ງເສີມຄວາມຄິດສ້າງສັນ ສໍາລັບນັກຮຽນຊັ້ນມັດທະຍົມສຶກສາ ປີທີ 1. *ວາລະສານສຶກສາສາດ ສະບັບວິໄຈບັນດິດສຶກສາ ມະຫາວິທະຍາໄລຂອນແກ່ນ ປີທີ 9 ສະບັບທີ 4 ປະຈໍາເດືອນຕຸລາ-ທັນວາ 2558*, 33.

ຕາຕະລາງທີ 1: ສະແດງການວິເຄາະຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ

| ຂໍ້ມູນທົ່ວໄປ | ຈໍານວນ | ເປີເຊັນ |
|---|---|---|
| ເພດ | | |
| ຊາຍ | 26 | 34.21 |
| ຍິງ | 50 | 65.79 |
| ລວມ | 76 | 100 |

ຕາຕະລາງທີ 2: ສະແດງຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານກ່ຽວກັບຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູປະຖົມລະດັບປະລິນຍາຕີ ປີທີ 3 ທີ່ຕອບແບບສອບຖາມ

| ລ/ດ | ລາຍການ | $\bar{X}$ | SD | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1 | ດ້ານເນື້ອໃນຫຼັກສູດ | 4.21 | 0.66 | ຫຼາຍ |
| 2 | ດ້ານບຸກຄະລິກກະພາບຂອງຄູສອນ | 4.29 | 0.64 | ຫຼາຍ |
| 3 | ດ້ານການຈັດການຮຽນ, ການສອນ | 4.21 | 0.65 | ຫຼາຍ |
| 4 | ດ້ານການວັດ ແລະ ປະເມີນຜົນ | 4.14 | 0.63 | ຫຼາຍ |
| 5 | ດ້ານສະພາບແວດລ້ອມໃນການຮຽນ | 4.15 | 0.73 | ຫຼາຍ |
| | ລວມ | 4.21 | 0.66 | ຫຼາຍ |

ຕາຕະລາງທີ 3: ສະແດງການປຽບທຽບຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູປະຖົມລະດັບປະລິນຍາຕີ ປີທີ 3 ຕໍ່ການຮຽນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ ໂດຍແຍກຕາມເພດ

| | ເພດ | ຈຳນວນ | t-test for Equality of Means | | | |
|---|---|---|---|---|---|---|
| | | | Mean | S.D | t | Sig. (2 tailed) |
| ຄວາມເພິ່ງພໍໃຈຕໍ່ການຮຽນວິຊາ ວິທີສອນສິລະປະກຳ ແລະ ຫັດຖະກຳ | ຊາຍ | 26 | 4.31 | 0.31 | 2.142* | 0.035 |
| | ຍິງ | 50 | 4.14 | 0.32 | | |